# COVID-19 (ໄວຣັສໂຄໂຣນາ) ແລະ ຜົນປະໂຫຍດ ປະກັນການຫວ່າງງານສໍາລັບລູກຈ້າງ

ຄໍາຖາມ ແລະ ຄໍາຕອບ

ຄໍາຖາມ **1:** ຂ້າພະເຈົ້າສາມາດໄດ້ຮັບຜົນປະໂຫຍດການຫວ່າງງານບໍ ຖ້າຂ້າພະເຈົ້າຖືກເລີກຈ້າງງານ ເນື່ອງຈາກບັນຫາທີ່ກ່ຽວຂ້ອງກັບໄວຣັສໂຄໂຣນາ (COVID-19)?
ຄໍາຕອບ**:** ໄດ້. ຜົນປະໂຫຍດການຫວ່າງງານໃນລັດໄອໂອວາມີໃຫ້ສໍາລັບຜູ້ທີ່ຫວ່າງງານໂດຍບໍ່ມີຄວາມຮັບຜິດຂອງຕົນເອງ. ຖ້ານາຍຈ້າງຕ້ອງປິດກິດຈະການ ແລະ ບໍ່ມີວຽກໃຫ້ເຮັດ, ລູກຈ້າງຂອງຕົນຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ ຖ້າພວກເຂົາເປັນໄປຕາມຫຼັກເກນທາງການເງິນ.

ຄໍາຖາມ **2:** ຖ້ານາຍຈ້າງຂອງຂ້າພະເຈົ້າປິດລູກຈ້າງອອກເນື່ອງຈາກການສູນເສຍການຜະລິດທີ່ເກີດຈາກໄວຣັສໂຄໂຣນາ, ລູກຈ້າງຈະມີສິດໄດ້ຮັບຜົນປະໂຫຍດປະກັນການຫວ່າງງານບໍ?
ຄໍາຕອບ**:** ໄດ້. ຜົນປະໂຫຍດມີໃຫ້ສໍາລັບບຸກຄົນໃດໜຶ່ງຜູ້ທີ່ຫວ່າງງານໂດຍບໍ່ມີຄວາມຮັບຜິດຂອງຕົນເອງ. ຖ້ານາຍຈ້າງຂອງຂ້າພະເຈົ້າປິດລູກຈ້າງອອກເນື່ອງຈາກການສູນເສຍການຜະລິດທີ່ເກີດຈາກໄວຣັສໂຄໂຣນາ, ບຸກຄົນອາດມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ ຖ້າພວກເຂົາເປັນໄປຕາມຫຼັກເກນທາງການເງິນ.

ຄໍາຖາມ **3:** ຖ້ານາຍຈ້າງຂອງຂ້າພະເຈົ້າປິດລູກຈ້າງຊົ່ວຄາວເນື່ອງຈາກການສູນເສຍ ຫຼື ບໍ່ມີວຽກເຮັດເນື່ອງຈາກ COVID-19, ລູກຈ້າງຈະມີສິດໄດ້ຮັບຜົນປະໂຫຍດປະກັນການຫວ່າງງານບໍ?
ຄໍາຕອບ: ໄດ້. ກົດໝາຍໄອໂອວາອະນຸຍາດໃຫ້ເລີກຈ້າງງານລູກຈ້າງຊົ່ວຄາວ ເມື່ອບໍ່ມີວຽກໃຫ້ເຮັດ.

ຄໍາຖາມ **4**: ນາຍຈ້າງຂອງຂ້າພະເຈົ້າສາມາດກໍານົດໃຫ້ຂ້າພະເຈົ້າຢູ່ໃນເຮືອນສໍາລັບໄລຍະເວລາການຟັກຕົວຂອງ COVID-19 ໄດ້ບໍ?
ຄໍາຕອບ: ໄດ້. ນາຍຈ້າງຂອງທ່ານສາມາດກໍານົດໃຫ້ທ່ານພັກຢູ່ເຮືອນເປັນເວລາ 14 ວັນ ຖ້າພວກເຂົາໄດ້ມີການເດີນທາງໄປຕ່າງປະເທດ ຫຼື ມີການສໍາຜັດກັບບາງຄົນທີ່ມາຈາກພູມມີພາກທີ່ໄດ້ຮັບຜົນກະທົບ. ກະລຸນາຕິດຕໍ່ນາຍຈ້າງຂອງທ່ານກ່ຽວກັບການເຮັດວຽກຢູ່ເຮືອນທີ່ເປັນໄປໄດ້, ການລາປ່ວຍ, ການພັກປະຈໍາປີ (“PTO”), ພະລາຊະບັນຍັດການພັກເນື່ອງຈາກສະພາບຄອບຄົວ ແລະ ທາງດ້ານການແພດ (“FMLA”), ຄວາມພິການ ແລະ ຕົວເລືອກອື່ນໆທີ່ພວກເຂົາອາດສະເໜີ. ຖ້າບໍ່ມີວັນພັກຊົດເຊີຍ, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ.

ຄໍາຖາມ **5**: ຖ້ານາຍຈ້າງຂອງຂ້າພະເຈົ້າຕ້ອງການໃຫ້ຂ້າພະເຈົ້າພັກຢູ່ເຮືອນ ເນື່ອງຈາກການເດີນທາງໄປຕ່າງປະເທດ ຫຼື ມີການຕິດຕໍ່ພົວພັນກັບຄົນທີ່ເຄີຍໄປຢ້ຽມຢາມພູມີພາກທີ່ໄດ້ຮັບຜົນກະທົບ, ຂ້າພະເຈົ້າມີສິດໄດ້ຮັບຜົນປະໂຫຍດການຫວ່າງງານບໍ?
ຄໍາຕອບ: ໄດ້. ນາຍຈ້າງຂອງທ່ານສາມາດກໍານົດໃຫ້ທ່ານພັກຢູ່ເຮືອນເປັນເວລາ 14 ວັນ ຖ້າພວກເຂົາໄດ້ມີການເດີນທາງໄປຕ່າງປະເທດ ຫຼື ມີການສໍາຜັດກັບບາງຄົນທີ່ມາຈາກພູມມີພາກທີ່ໄດ້ຮັບຜົນກະທົບ. ກະລຸນາຕິດຕໍ່ນາຍຈ້າງຂອງທ່ານກ່ຽວກັບການເຮັດວຽກຢູ່ເຮືອນທີ່ເປັນໄປໄດ້, ການລາປ່ວຍ, PTO, FMLA, ຄວາມພິການ ແລະ ຕົວເລືອກອື່ນໆທີ່ພວກເຂົາອາດສະເໜີ. ຖ້າບໍ່ມີວັນພັກຊົດເຊີຍ, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ.

ຄຳຖາມ **6:** ຖ້າຂ້າພະເຈົ້າຖືກກັກບໍລິເວນແບບບັງຄັບເນື່ອງຈາກສິ່ງໄສ່ວ່າຕິດເຊື້ອ COVID-19, ຂ້າພະເຈົ້າຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານບໍ?
ຄຳຕອບ**:** ການມີສິດໄດ້ຮັບຈະຖືກພິຈາລະນາຕາມສະຖານະການໄປເທື່ອລະກໍລະນີ. ຖ້າຫາກສິ່ງໄສ່ວ່າມີ COVID-19 ຖືກຕ້ອງຕາມກົດໝາຍ ແລະ ເປັນຄວາມຈິງ ສະແດງວ່າມີໂອກາດສູງທີ່ຈະຕິດເຊື້ອ, ທ່ານອາດມີສິດໄດ້ຮັບຜົນປະໂຫຍດສຳລັບໄລຍະການພັກຕົວຂອງໄວຣັສ. ກະລຸນາຕິດຕໍ່ນາຍຈ້າງຂອງທ່ານກ່ຽວກັບການເຮັດວຽກຢູ່ເຮືອນທີ່ເປັນໄປໄດ້, ການລາປ່ວຍ, PTO, FMLA, ຄວາມພິການ ແລະ ຕົວເລືອກອື່ນໆທີ່ພວກເຂົາອາດສະເໜີ. ຖ້າບໍ່ມີວັນພັກຊົດເຊີຍ, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ.

ຄຳຖາມ **7:** ຖ້າຂ້າພະເຈົ້າຍັງຄົງເປັນໄຂ້ຍ້ອນ COVID-19 ແລະ ບໍ່ສາມາດເຮັດວຽກໄດ້, ຂ້າພະເຈົ້າຈະໄດ້ຮັບຜົນປະໂຫຍດການຫວ່າງງານບໍ?
ຄຳຕອບ**:** ໄດ້. ກະລຸນາຕິດຕໍ່ນາຍຈ້າງຂອງທ່ານກ່ຽວກັບການເຮັດວຽກຢູ່ເຮືອນທີ່ເປັນໄປໄດ້, ການລາປ່ວຍ, PTO, FMLA, ຄວາມພິການ ແລະ ຕົວເລືອກອື່ນໆທີ່ພວກເຂົາອາດສະເໜີ. ຖ້ານາຍຈ້າງຂອງທ່ານບໍ່ສາມາດໃຫ້ການພັກແບບຈ່າຍເງິນໄດ້, ທ່ານອາດຈະບໍ່ມີສິດໄດ້ຮັບການອ້າງສິດການຫວ່າງງານຂອງລັດ ແຕ່ອາດຈະມີສິດໄດ້ຮັບຄວາມຊ່ວຍເຫຼືອກໍລະນີຫວ່າງງານເນື່ອງຈາກການລະບາດ (“PUA”).

ຄຳຖາມ **8**: ຖ້ານາຍຈ້າງຂອງຂ້າພະເຈົ້າປິດກິດຈະການ ຍ້ອນລູກຈ້າງຄົນອື່ນເປັນໄຂ້ພ້ອມຕິດເຊື້ອ COVID-19, ຂ້າພະເຈົ້າຈະມີສິດໄດ້ຮັບຜົນປະໂຫຍດບໍ?
ຄຳຕອບ: ແມ່ນແລ້ວ, ທ່ານຈະມີສິດໄດ້ຮັບຜົນປະໂຫຍດ.

ຄຳຖາມ **9***:* ຖ້າຂ້າພະເຈົ້າບໍ່ສາມາດເຮັດວຽກໄດ້ ເນື່ອງຈາກນາຍຈ້າງຂອງຂ້າພະເຈົ້າປິດກິດຈະການ ຍ້ອນບັນຫາດ້ານສຸຂະພາບທີ່ກ່ຽວຂ້ອງກັບ COVID-19, ຂ້າພະເຈົ້າຈຳເປັນຕ້ອງໄດ້ຕື່ມຂໍ້ມູນໃສ່ການຊອກວຽກໃຫ້ສຳເລັດບໍ?
ຄຳຕອບ**:** ຖ້າທ່ານຍື່ນການອ້າງສິດເນື່ອງຈາກຜົນຂອງ COVID-19, ທ່ານບໍ່ຈຳເປັນຕ້ອງຊອກຫາວຽກ. ຖ້າສະຖານະຂອງທ່ານມີການປ່ຽນແປງກັບນາຍຈ້າງຂອງທ່ານ ແລະ ທ່ານບໍ່ມີແຜນທີ່ຈະກັບຄືນໄປເຮັດວຽກ, ກະລຸນາຕິດຕໍ່ພວກເຮົາ.

ຄຳຖາມ **10**: ຈະເປັນແນວໃດ ຖ້ານາຍຈ້າງຂອງຂ້າພະເຈົ້າຫຼຸດຊົ່ວໂມງເຮັດວຽກລົງ ຍ້ອນທຸລະກິດມີການຊະລໍຕົວລົງ, ຂ້າພະເຈົ້າຈະຍັງຄົງມີສິດໄດ້ຮັບຜົນປະໂຫຍດບໍ?
ຄຳຕອບ: ອາດຈະໄດ້ຮັບ. ລັດໄອໂອວາອະນຸຍາດໃຫ້ຮັບຜົນປະໂຫຍດການຫວ່າງງານບາງສ່ວນ. ທ່ານຈຳເປັນຕ້ອງໄດ້ລາຍງານຄ່າຈ້າງທີ່ໄດ້ຮັບໃນແຕ່ລະອາທິດຂອງພວກເຂົາ ເມື່ອເຮັດການອ້າງສິດສຳລັບຜົນປະໂຫຍດປະຈຳອາທິດຂອງທ່ານ. ລາຍໄດ້ປະເພດນີ້ລວມທັງ: ຄ່າຈ້າງ; ການຈ່າຍວັນຢຸດ; ລາປ່ວຍ; ການຈ່າຍແບບສະແຕນບາຍ; ເງິນທິບ, ເງິນສົມມະນາຄຸນ, ເງິນຄ່ານາຍໜ້າ ແລະ ເງິນຈູງໃຈ; ແລະ ການຊົດເຊີຍອື່ນໆໃດໜຶ່ງນອກເໜືອຈາກເງິນສົດ (ເຊັ່ນ ຄ່າຫ້ອງພັກ ແລະ ອາຫານ, ຄ່າໂທລະສັບມືຖື). ທ່ານອາດຈະມີລາຍໄດ້ຫຼາຍເຖິງ 25 ເປີເຊັນຂອງຈຳນວນຜົນປະໂຫຍດປະຈຳອາທິດ (“WBA”) ຂອງທ່ານ ກ່ອນການຈ່າຍເງິນຜົນປະໂຫຍດຈະຫຼຸດລົງ, ແຕ່ກໍ່ຍັງມີຄວາມຕ້ອງການໃຫ້ລາຍງານລາຍໄດ້ທັງໝົດ ເຖິງແມ່ນວ່າຈະຕ່ຳກວ່າ 25 ເປີເຊັນກໍ່ຕາມ. ລາຍໄດ້ສູງກວ່າ 25 ເປີເຊັນຈະຫຼຸດການຈ່າຍເງິນຜົນປະໂຫຍດຂອງທ່ານ. ຖ້າທ່ານໄດ້ຮັບ $15 ຫຼື ຫຼາຍກວ່າ WBA ຂອງທ່ານ, ທ່ານຈະບໍ່ໄດ້ຮັບການຈ່າຍເງິນຜົນປະໂຫຍດສຳລັບອາທິດນັ້ນ. ຕົວຢ່າງ:

WBA ຂອງທ່ານແມ່ນ $400 ແລະ ທ່ານໄດ້ຮັບ $370.

25% ຂອງ $400 ແມ່ນ $100. $100 ຈະບໍ່ຖືກຫັກຈາກ WBA.

$370 - $100 = $270. ສ່ວນທີ່ເຫຼືອ $270 ຈະຖືກຫັກຈາກ WBA.

$400 - $270 = $130.

$130 ເປັນຈຳນວນທີ່ຕ້ອງຈ່າຍສຳລັບອາທິດນັ້ນ.

ຄຳຖາມ **11***:* ຂ້າພະເຈົ້າຖືກເລີກຈ້າງງານເນື່ອງຈາກ COVID-19. ຂ້າພະເຈົ້າໄດ້ໃຊ້ເວລາຍາມພັກບາງສ່ວນໃນຊ່ວງການເລີກຈ້າງງານນີ້; ຂ້າພະເຈົ້າຈຳເປັນຕ້ອງໄດ້ລາຍງານສິ່ງນີ້ຫຼືບໍ່ ຖ້າຂ້າພະເຈົ້າຍື່ນເລື່ອງການຫວ່າງງານ?
ຄຳຕອບ**:** ຄ່າໃຊ້ຈ່າຍຊ່ວງວັນພັກສາມາດລາຍງານໄດ້ສຳລັບຈຸດປະສົງປະກັນການຫວ່າງງານ. ກະລຸນາເບິ່ງຄຳຕອບຂ້າງເທິງ.

ຄຳຖາມ **12:** ຝ່າຍພັດທະນາແຮງງານຂອງລັດໄອໂອວາ (“IWD”) ຈະຮູ້ໄດ້ຢ່າງໃດວ່າຂ້າພະເຈົ້າໄດ້ລາຍງານຄ່າຈ້າງຂອງຂ້າພະເຈົ້າຢ່າງຖືກຕ້ອງ?
ຄຳຕອບ**:** ການອ້າງສິດໃດໜຶ່ງທີ່ຍື່ນມາແມ່ນຂື້ນຢູ່ກັບການກວດສອບ ຫຼື ການສືບສວນ. ນາຍຈ້າງຂອງທ່ານລາຍງານຄ່າຈ້າງທີ່ຈ່າຍໃຫ້ກັບລູກຈ້າງແຕ່ລະຄົນທຸກໆໄຕມາດ. IWD ມີໂປຣແກຣມຄອມພິວເຕີທີ່ກວດເຊັກຄວາມຖືກກັນຂອງຄ່າຈ້າງທີ່ຈ່າຍ ແລະ ຄ່າຈ້າງທີ່ລາຍງານເມື່ອຍື່ນການອ້າງສິດ. ຖ້າ IWD ພິຈາລະນາວ່າ ທ່ານລາຍງານຄ່າຈ້າງແບບຫຼອກລວງ, ທ່ານຈະຖືກຢຸດການໄດ້ຮັບຜົນປະໂຫຍດ ແລະ ຈະຖືກລົງໂທດ 15%, ຄຸນສົມບັດທີ່ບໍ່ເໝາະສົມສຳລັບຜົນປະໂຫຍດໃນອະນາຄົດ ແລະ ການດຳເນີນຄະດີທາງອາຍາ.

ຄຳຖາມ **13:** ຂ້າພະເຈົ້າເຮັດທຸລະກິດສ່ວນຕົວ ແລະ ມັນຈະຕ້ອງໃຊ້ເວລາກ່ອນທີ່ທຸລະກິດຂອງຂ້າພະເຈົ້າຈະກັບຄືນສູ່ລະດັບກ່ອນການລະບາດ.  ຂ້າພະເຈົ້າຍັງຄົງມີສິດໄດ້ຮັບຜົນປະໂຫຍດບໍ?
ຄຳຕອບ**:** ອາດຈະໄດ້ຮັບ. ຜົນປະໂຫຍດບາງສ່ວນມີໃຫ້ຢູ່ພາຍໃຕ້ PUA. ຖ້າຫາກວ່າຊົ່ວໂມງທີ່ຫຼຸດລົງຍັງຄົງກ່ຽວຂ້ອງກັບເຫດຜົນ COVID-19, ທ່ານຍັງຄົງຈະມີສິດ. ຖ້າທ່ານໄດ້ຮັບ $15 ຫຼື ຫຼາຍກວ່າ WBA ຂອງທ່ານ, ທ່ານຈະບໍ່ໄດ້ຮັບການຈ່າຍເງິນຜົນປະໂຫຍດສຳລັບອາທິດນັ້ນ. ທ່ານຄວນລາຍງານທຸກໆລາຍໄດ້ລວມທີ່ໄດ້ຮັບໃນອາທິດນັ້ນສຳລັບການບໍລິການທີ່ດຳເນີນການ ແລະລາຍໄດ້ໃດໜຶ່ງທີ່ໄດ້ຮັບກ່ອນການລະບາດທີ່ທ່ານໄດ້ຮັບເງິນໃນອາທິດນັ້ນ.

ຄຳຖາມ **14:** ຂ້າພະເຈົ້າເຮັດທຸລະກິດສ່ວນຕົວ, IWD ຈະຮູ້ໄດ້ແນວໃດວ່າຂ້າພະເຈົ້າໄດ້ລາຍງານລາຍໄດ້ຂອງຂ້າພະເຈົ້າຢ່າງຖືກຕ້ອງ? ຄຳຕອບ**:** IWD ຈະເຮັດການກວດສອບ ແລະ ສືບສວນການອ້າງສິດທີ່ໄດ້ຍື່ນໄປ. ທ່ານຮັບຮອງໃນການອ້າງສິດແຕ່ລະຄັ້ງທີ່ທ່ານໄດ້ຍື່ນວ່າທ່ານໄດ້ໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ເປັນຄວາມຈິງ. ຖ້າທ່ານພົບວ່າມີການອ້າງສິດຜົນປະໂຫຍດການຫວ່າງງານແບບຫຼອກລວງ ທ່ານອາດຈະຖືກລົງໂທດທັງທາງແພ່ງ ແລະ ທາງອາຍາ.

ຄຳຖາມ **15:** COVID-19 ຖືເປັນໄພພິບັດບໍ ແລະ ຂ້າພະເຈົ້າສາມາດໄດ້ຮັບຄວາມຊ່ວຍເຫຼືອກໍລະນີຫວ່າງງານເນື່ອງຈາກໄພພິບັດນີ້ບໍ ຖ້າຂ້າພະເຈົ້າບໍ່ມີສິດໄດ້ຮັບຜົນປະໂຫຍດປະກັນການຫວ່າງງານ?
ຄຳຕອບ**:** ໄພທີ່ຮ້າຍແຮງຍັງບໍ່ໄດ້ຖືກປະກາດໂດຍປະທານາທິບໍດີສຳລັບການຊ່ວຍເຫຼືອເປັນລາຍບຸກຄົນ. ຖ້າປະທານາທິບໍດີຂອງສະຫະລັດອາເມລິກາປະກາດວ່າ COVID-19 ເປັນໄພພິບັດແຫ່ງຊາດ ແລະ ຖ້າບຸກຄົນປະສົບກັບການສູນເສຍວຽກໃນລັດໄອໂອວາຍ້ອນຜົນດັ່ງກ່າວ, ພວກເຂົາອາດມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ ແລະ/ຫຼື ການຊ່ວຍເຫຼືອການຫວ່າງງານຈາກໄພພິບັດ

("DUA").

ຄຳຖາມ **16**: ຈະເປັນແນວໃດຖ້າຂ້າພະເຈົ້າຕິດເຊື້ອ COVID-19 ໃນຂະນະທີ່ເຮັດວຽກ; ຂ້າພະເຈົ້າຈະມີສິດໄດ້ຮັບຜົນປະໂຫຍດບໍ?
ຄຳຕອບ: ກະລຸນາຕິດຕໍ່ນາຍຈ້າງຂອງທ່ານກ່ຽວກັບການເຮັດວຽກຢູ່ເຮືອນທີ່ເປັນໄປໄດ້, ລາປ່ວຍ, PTO, FMLA, ຄວາມພິການ, ຄ່າຊົດເຊີຍຂອງຄົນງານ ແລະ ຕົວເລືອກອື່ນໆທີ່ພວກເຂົາອາດສະເໜີ. ຖ້າບໍ່ມີວັນພັກຊົດເຊີຍ, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ.

ຄຳຖາມ **17**: ຈະເປັນແນວໃດຖ້າຂ້າພະເຈົ້າຕິດເຊື້ອ COVID-19 ແລະ ຈະຕ້ອງອອກຈາກວຽກ, ຂ້າພະເຈົ້າມີສິດໄດ້ຮັບຜົນປະໂຫຍດບໍ?
ຄຳຕອບ: ແຕ່ລະສະຖານະການຈະຖືກຈັດການຕາມຄວາມເປັນຈິງຂອງການແຍກ. ທ່ານສາມາດຍື່ນເລື່ອງຜົນປະໂຫຍດປະກັນການຫວ່າງງານ ຖ້າທ່ານຖືກເລີກຈ້າງງານ ຫຼື ຖືກແຍກຈາກນາຍຈ້າງຂອງທ່ານ ແລະ ທ່ານບໍ່ໄດ້ເຮັດວຽກໃນຂະນະນີ້. ການຕັດສິນຈະຖືກເຮັດຕາມເຫດຜົນຂອງການແຍກ. ຖ້າທ່ານບໍ່ມີສິດໄດ້ຮັບຜົນປະໂຫຍດຂອງລັດ, ທ່ານອາດຈະຍັງຄົງມີສິດໄດ້ຮັບຜົນປະໂຫຍດພາຍໃຕ້ PUA.

ຄຳຖາມ **18:** ຂ້າພະເຈົ້າໄດ້ກັບຄືນໄປເຮັດວຽກແລ້ວ ແຕ່ຄິດວ່າສະພາບແວດລ້ອມການເຮັດວຽກຂອງຂ້າພະເຈົ້າບໍ່ປອດໄພ, ຂ້າພະເຈົ້າສາມາດລາອອກ ແລະ ຍັງຄົງໄດ້ຮັບຜົນປະໂຫຍດການຫວ່າງງານບໍ? ຂ້າພະເຈົ້າບໍ່ມີໂຣກປະຈຳຕົວ ຫຼື ອາການເຈັບປ່ວຍທີ່ກ່ຽວຂ້ອງກັບ COVID-19 ໃດໜຶ່ງມາກ່ອນ.
ຄຳຕອບ**:** ກ່ອນອື່ນທ່ານຄວນຈະລົມກັບນາຍຈ້າງຂອງທ່ານກ່ຽວກັບຂໍ້ກັງວົງຂອງທ່ານ ແລະ ຖ້າຈຳເປັນກໍ່ຄວນພົບທ່ານໝໍຂອງທ່ານ. ຖ້ານາຍຈ້າງຂອງທ່ານກຳລັງດຳເນີນການ ເພື່ອສ້າງສະຖານທີ່ເຮັດວຽກທີ່ປອດໄພຂື້ນ, ຕົວຢ່າງ, ການຈັດໃຫ້ມີບ່ອນຊັກເຄື່ອງພິເສດ, ສຸຂະພິບານເພີ່ມເຕີມ, PPE ເຊັ່ນ ໜ້າກາກ ແລະ ຖົງມື ຫຼື ປະຕິບັດຕາມຄຳແນະນຳໄລຍະຫ່າງທາງສັງຄົມ, ທ່ານອາດຈະບໍ່ມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ ຖ້າທ່ານເລືອກທີ່ຈະລາອອກຈາກວຽກ. ຖ້ານາຍຈ້າງຂອງທ່ານປະຕິເສດທີ່ຈະປະຕິບັດຕາມມາດຕະການຮັກສາຄວາມປອດໄພ ແລະ ທິດຊີ້ນຳຂອງ OSHA ທີ່ແນະນຳໂດຍລັດ ຫຼື ລັດຖະບານກາງສຳລັບອຸດສະຫາກຳຂອງທ່ານ, ຈາກນັ້ນທ່ານອາດຈະສາມາດໄດ້ຮັບຜົນປະໂຫຍດການຫວ່າງງານ. ຢ່າງໃດກໍ່ຕາມ, ບໍ່ວ່າທ່ານຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານມີຄວາມເປັນຈິງທີ່ສະເພາະເຈາະຈົງຫຼືບໍ່ ແລະ ຈະຖືກພິຈາລະນາເປັນລາຍກໍລະນີໄປ. ຖ້ານາຍຈ້າງຂອງທ່ານໂຕ້ແຍ້ງກັບການອ້າງສິດນັ້ນ, ຈຳເປັນຕ້ອງໄດ້ມີການສຳພາດຊອກຫາຄວາມຈິງກ່ອນທີ່ຜົນປະໂຫຍດຈະຖືກຈ່າຍ. ສິ່ງນີ້ເປັນຈິງບໍ່ວ່າທ່ານຈະມີສິດໄດ້ຮັບຜົນປະໂຫຍດປະເພດໃດກໍ່ຕາມ.

ຄຳຖາມ **19**: ຈະເປັນແນວໃດ ຖ້າຂ້າພະເຈົ້າເຊື່ອວ່າສະຖານທີ່ເຮັດວຽກຂອງຂ້າພະເຈົ້າບໍ່ປອດໄພ ແລະ ຂ້າພະເຈົ້າມີໂລກປະຈຳຕົວທີ່ມີຢູ່ມາກ່ອນທີ່ເຮັດໃຫ້ຂ້າພະເຈົ້າມີຄວາມສ່ຽງສູງຕໍ່ການຕິດເຊື້ອ COVID-19? ຂ້າພະເຈົ້າສາມາດລາອອກໃນເວລານັ້ນ ແລະ ຍັງຈະໄດ້ຮັບຜົນປະໂຫຍດການຫວ່າງງານຢູ່ບໍ?
ຄຳຕອບ: ທ່ານຄວນຈະລົມກັບທ່ານໝໍຂອງທ່ານ ແລະ ນາຍຈ້າງຂອງທ່ານກ່ຽວກັບຂໍ້ກັງວົນຂອງທ່ານ. ຖ້ານາຍຈ້າງຂອງທ່ານປະຕິເສດທ່ານເຖິງທີ່ພັກທີ່ເໝາະສົມຕາມຄວາມຕ້ອງການຂອງທ່ານໝໍຂອງທ່ານ ເນື່ອງຈາກໂລກປະຈຳຕົວທີ່ມີມາກ່ອນ ຫຼື ຖ້າບໍ່ສາມາດຈັດຫາສະພາບແວດລ້ອມການເຮັດວຽກທີ່ປອດໄພ (ເຊັ່ນ ການເຮັດວຽກຈາກເຮືອນ) ແກ່ທ່ານໄດ້, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ ຖ້າທ່ານເລືອກທີ່ຈະລາອອກຈາກວຽກຫາກນາຍຈ້າງຂອງທ່ານປະຕິເສດທີ່ດຳເນີນການຕໍ່ກັບການລາພັກວຽກຂອງທ່ານ.

ຄຳຖາມ **20**: ຈະເປັນແນວໃດຖ້າຂ້າພະເຈົ້າມີຄວາມຢ້ານໃນການເຮັດວຽກ ຫຼື ເຮັດວຽກຂອງຂ້າພະເຈົ້າ ເພາະຂ້າພະເຈົ້າຢ້ານວ່າຂ້າພະເຈົ້າອາດຈະໄດ້ຮັບການຕິດເຊື້ອ COVID-19. ຂ້າພະເຈົ້າບໍ່ມີໂລກປະຈຳຕົວ; ຂ້າພະເຈົ້າພຽງແຕ່ບໍ່ຕ້ອງການເຮັດວຽກໃນຂະນະທີ່ສິ່ງນີ້ກຳລັງເກີດຂື້ນຢູ່. ຖ້າຂ້າພະເຈົ້າອອກຈາກວຽກ ຫຼື ປະຕິເສດທີ່ຈະເຮັດວຽກ ຂ້າພະເຈົ້າຈະມີສິດໄດ້ຮັບຜົນປະໂຫຍດ

ບໍ?

ຄໍາຕອບ: ຖ້າຫາກວ່າທ່ານເລືອກທີ່ຈະບໍ່ເຂົ້າໄປເຮັດວຽກ ຫຼື ກັບຄືນໄປເຮັດວຽກ, ສິ່ງນີ້ຖືວ່າເປັນການລາອອກແບບສະໝັກໃຈ, ການປະລະວຽກ ຫຼື ການປະຕິເສດທີ່ຈະກັບໄປເຮັດວຽກ. ກະລຸນາຕິດຕໍ່ນາຍຈ້າງຂອງທ່ານກ່ຽວກັບການເຮັດວຽກຢູ່ເຮືອນທີ່ເປັນໄປໄດ້, ການລາປ່ວຍ, PTO, FMLA, ຄວາມພິການ ແລະ ທາງເລືອກອື່ນໆທີ່ພວກເຂົາອາດສະເໜີ. ຖ້າທ່ານບໍ່ມີຄຸນສົມບັດສໍາລັບການລາພັກແບບໄດ້ຮັບຄ່າຈ້າງ, ທ່ານຈໍາເປັນຕ້ອງໄດ້ເຮັດວຽກ ແລະ ຖ້າທ່ານລາອອກວຽກແທນ, ທ່ານຈະບໍ່ມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ.

ຖ້າທ່ານບໍ່ມີສິດໄດ້ຮັບຜົນປະໂຫຍດຂອງລັດ, ທ່ານອາດຈະສະໝັກ PUA. ເຫດຜົນບາງຢ່າງທີ່ທ່ານອາດປະຕິເສດທີ່ຈະເຮັດວຽກ ເຊິ່ງອາດສົ່ງຜົນໃຫ້ມີຄຸນສົມບັດໄດ້ຮັບຜົນປະໂຫຍດການຫວ່າງງານສໍາລັບ PUA ລວມເຖິງ ແຕ່ບໍ່ຈໍາກັດພຽງ:

1. ທ່ານໄດ້ຮັບການບົ່ງມະຕິວ່າຕິດເຊື້ອ COVID-19 ຫຼື ກໍາລັງສະແດງອາການອອກມາ.
2. ສະມາຊິກໃນຄົວເຮືອນຂອງທ່ານໄດ້ຮັບການບົ່ງມະຕິວ່າຕິດເຊື້ອ COVID-19.
3. ທ່ານກໍາລັງໃຫ້ການດູແລສະມາຊິກໃນຄົວເຮືອນຜູ້ທີ່ໄດ້ຮັບການບົ່ງມະຕິວ່າຕິດເຊື້ອ COVID-19.
4. ທ່ານ ຫຼື ສະມາຊິກໃນຄົວເຮືອນຂອງທ່ານ, ຢູ່ໃນປະເພດທີ່ມີຄວາມສ່ຽງສູງຂຶ້ນ ແລະ ໄດ້ຮັບການແນະນໍາຈາກຜູ້ໃຫ້ບໍລິການດູແລສຸຂະພາບຂອງທ່ານໃນການກັກບໍລິເວນຕົນເອງ ເນື່ອງຈາກຄວາມກັງວົນທີ່ກ່ຽວຂ້ອງກັບ COVID-19.
5. ທ່ານຂາດການດູແລເດັກທີ່ຈໍາເປັນທີ່ກ່ຽວຂ້ອງກັບ COVID-19.
6. ທ່ານບໍ່ສາມາດເຂົ້າເຖິງບ່ອນເຮັດວຽກໄດ້ ເນື່ອງຈາກການກັກຕົວເອງທີ່ກ່ຽວຂ້ອງກັບ COVID-19.
7. ທ່ານຕິດເຊື້ອ COVID-19 ແລະ ໄດ້ຮັບການປິ່ນປົວດີ, ແຕ່ມັນເຮັດໃຫ້ເກີດຄວາມຫຍຸ້ງຍາກເຊິ່ງເຮັດໃຫ້ທ່ານບໍ່ສາມາດປະຕິບັດໜ້າທີ່ສໍາຄັນໄດ້.

ຂໍ້ມູນ ແລະ ຄໍາແນະນໍາເພີ່ມເຕີມກ່ຽວກັບວິທີການສະໝັກ PUA ມີຢູ່ທີ່: [https://www.iowaworkforcedevelopment.gov/pua-information](https://www.iowaworkforcedevelopment.gov/pua-information)

ຄໍາຖາມ **21**: ຂ້າພະເຈົ້າເຊື່ອວ່າ ຂ້າພະເຈົ້າອາດຈະໄດ້ຮັບເງິນຜົນປະໂຫຍດການຫວ່າງງານຫຼາຍກວ່າທີ່ຂ້າພະເຈົ້າຈະໄປເຮັດວຽກ, ຂ້າພະເຈົ້າສາມາດຕັດສິນໃຈດໍາເນີນການຕໍ່ກ່ຽວກັບການຫວ່າງງານນີ້ໄດ້ບໍ?

ຄໍາຕອບ: ບໍ່ໄດ້. ທ່ານຈະຕ້ອງໄດ້ຖືກເລີກຈ້າງງານ, ເລີກຈ້າງງານຊົ່ວຄາວ ຫຼື ມີການຫຼຸດຊົ່ວໂມງເຮັດວຽກລົງຈາກນາຍຈ້າງຂອງທ່ານເພື່ອມີສິດໄດ້ຮັບຜົນປະໂຫຍດດັ່ງກ່າວ. ຖ້າຫາກວ່າທ່ານອອກວຽກໂດຍບໍ່ແຈ້ງລ່ວງໜ້າ, ປະຕິເສດທີ່ຈະເຮັດວຽກ ຫຼື ປະຕິເສດທີ່ຈະກັບໄປເຮັດວຽກໂດຍບໍ່ໄດ້ຮັບສິດໃນການລາພັກແບບໄດ້ຮັບຄ່າຈ້າງ; ທ່ານຈະບໍ່ມີສິດໄດ້ຮັບຜົນປະໂຫຍດ. ການອອກຈາກວຽກພຽງເພື່ອເກັບຜົນປະໂຫຍດການຫວ່າງງານເປັນການສໍ້ໂກງ ແລະ ອາດສົ່ງຜົນໃຫ້ສູນເສຍຜົນປະໂຫຍດ ລວມທັງໂທດທາງອາຍາ ແລະ ທາງແພ່ງ.

ຄໍາຖາມ **22**: ຖ້າຂ້າພະເຈົ້າໄດ້ຮັບເງິນຜົນປະໂຫຍດປະກັນການຫວ່າງງານ ແລະ ຕໍ່ມາໄດ້ມີການພິຈາລະນາວ່າ ຂ້າພະເຈົ້າບໍ່ມີສິດໄດ້ຮັບຜົນປະໂຫຍດເຫຼົ່ານັ້ນ, ຂ້າພະເຈົ້າຈໍາເປັນຈະຕ້ອງຈ່າຍຄືນຜົນປະໂຫຍດທີ່ຂ້າພະເຈົ້າໄດ້ຮັບບໍ?

ຄໍາຕອບ: ໄດ້. ຖ້າການຕັດສິນໃຈຄັ້ງສຸດທ້າຍຄືທ່ານບໍ່ມີສິດໄດ້ຮັບ, ທ່ານຈະຕ້ອງຄືນຜົນປະໂຫຍດເຫຼົ່ານັ້ນ.

ຄໍາຖາມ **23**: ຖ້າມີການຕັດສິນວ່າ ຂ້າພະເຈົ້າໄດ້ເຮັດການສໍ້ໂກງໂດຍການປົກປິດຄວາມຈິງທີ່ກ່ຽວຂ້ອງກ່ຽວກັບການອ້າງສິດຂອງຂ້າພະເຈົ້າ, ຈະເກີດຫຍັງຂຶ້ນ?

ຄຳຕອບ: ຖ້າທ່ານຖືກຕັດສິນວ່າໄດ້ມີການເຮັດການສໍ້ໂກງ ເພື່ອຮັບເອົາຜົນປະໂຫຍດປະກັນການຫວ່າງງານ, ທ່ານຈະຖືກສົ່ງຕໍ່ໄປໃຫ້ດຳເນີນຄະດີທາງອາຍາ. ນອກຈາກນີ້ ທ່ານຍັງຈະບໍ່ສາມາດສະໝັກຮັບຜົນປະໂຫຍດອີກຄັ້ງ ຈົນກວ່າທ່ານຈະຈ່າຍຄືນຜົນປະໂຫຍດດັ່ງກ່າວບວກກັບຄ່າປັບໄໝທີ່ໄດ້ຮັບຄຳສັ່ງຈາກລັດຖະບານກາງ 15% ກ່ຽວກັບຜົນປະໂຫຍດທີ່ໄດ້ຮັບແບບສໍ້ໂກງ.

ຄຳຖາມ **24:** ຖ້າໃນປະຈຸບັນນີ້ ຂ້າພະເຈົ້າກຳລັງໄດ້ຮັບຜົນປະໂຫຍດການຫວ່າງງານ ແລະ ບໍ່ສາມາດຊອກຫາວຽກໄດ້ເນື່ອງຈາກບໍລິສັດຕ່າງໆບໍ່ໄດ້ຈ້າງງານຍ້ອນ COVID-19, ຂ້າພະເຈົ້າມີສິດໄດ້ຮັບການຂະຫຍາຍໄລຍະເວລາອອກໄປບໍ?
ຄຳຕອບ: ພະລາຊະບັນຍັດ CARES ລວມເຖິງການຊົດເຊີຍການຫວ່າງງານສຸກເສີນເນື່ອງຈາກການລະບາດ (“PEUC”) ເຊິ່ງຂະຫຍາຍສິດຜົນປະໂຫຍດສຳລັບຜູ້ອ້າງສິດຜູ້ທີ່ໝົດສິດຜົນປະໂຫຍດການຫວ່າງງານຈາກລັດຂອງພວກເຂົາ ແລະ ການອ້າງສິດຂອງພວກເຂົາຍັງບໍ່ທັນໝົດອາຍຸ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງ: https://www.iowaworkforcedevelopment.gov/peuc-information.

ຄຳຖາມ **25:** ຂ້າພະເຈົ້າໄດ້ຮັບການບົ່ງມະຕິວ່າຕິດເຊື້ອ COVID-19 ແລະ ຂ້າພະເຈົ້າໄດ້ນອນປິ່ນປົວຢູ່ໂຮງໝໍ ແລະ/ຫຼື ໄດ້ຖືກກັກບໍລິເວນ. ນາຍຈ້າງຂອງຂ້າພະເຈົ້າໄດ້ໄລ່ຂ້າພະເຈົ້າອອກຈາກວຽກຍ້ອນບໍ່ໄປເຮັດວຽກ ຫຼື ໂທຫາພວກເຂົາ. ຂ້າພະເຈົ້າມີສິດໄດ້ຮັບຜົນປະໂຫຍດພາຍໃຕ້ສະຖານະການນີ້ບໍ?
ຄຳຕອບ: ສະຖານະການນີ້ຈະໄດ້ຮັບການພິຈາລະນາວ່າເປັນການແຍກ ແລະ ຈະຖືກຕັດສິນຕາມກົດໝາຍວ່າດ້ວຍການຫວ່າງງານຂອງລັດໄອໂອວາ. ຖ້າທ່ານບໍ່ມີສິດໄດ້ຮັບພາຍໃຕ້ກົດໝາຍຂອງລັດ, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດພາຍໃຕ້ PUA.

ຄຳຖາມ **26:** ຂ້າພະເຈົ້າອາດຈະປະເຊີນກັບ COVID-19 ແລະ ນາຍຈ້າງຂອງຂ້າພະເຈົ້າຄົ້ນພົບ ແລະ ບອກຂ້າພະເຈົ້າບໍ່ໃຫ້ມາເຮັດວຽກເປັນເວລາ 2 ອາທິດ. ຂ້າພະເຈົ້າມີສິດໄດ້ຮັບຜົນປະໂຫຍດຢູ່ບໍ ເນື່ອງຈາກນາຍຈ້າງບໍ່ໃຫ້ມາເຮັດວຽກ? ຄຳຕອບ: ທ່ານຄວນຈະປຶກສາກັບນາຍຈ້າງຂອງທ່ານກ່ຽວກັບການພັກແບບໃດທີ່ອາດຈະໃຊ້ໄດ້ໃນຊ່ວງເວລາທີ່ພວກເຂົາບໍ່ຍອມໃຫ້ທ່ານກັບໄປເຮັດວຽກ. ຖ້າບໍ່ມີວັນພັກຊົດເຊີຍ, ທ່ານອາດຈະມີສິດໄດ້ຮັບຜົນປະໂຫຍດການຫວ່າງງານ.

ຄຳຖາມ **27**: ຈະເປັນແນວໃດຖ້າຜູ້ຢູ່ອາໄສ, ສະມາຊິກໃນຄອບຄົວ ຫຼື ລູກຂອງຂ້າພະເຈົ້າມີການຍົກເລີກໂຮງຮຽນ ແລະ ຂ້າພະເຈົ້າຈະຕ້ອງຢູ່ບ້ານ ແລະ ເບິ່ງແຍງດູແລພວກເຂົາ, ຂ້າພະເຈົ້າຈະມີສິດກໍລະນີຫວ່າງງານບໍ?
ຄຳຕອບ: ກະລຸນາຕິດຕໍ່ນາຍຈ້າງຂອງທ່ານກ່ຽວກັບການເຮັດວຽກຢູ່ເຮືອນທີ່ເປັນໄປໄດ້. ທ່ານອາດຈະມີສິດໄດ້ຮັບການລາພັກແບບໄດ້ຄ່າຈ້າງເປັນເວລາສອງອາທິດພາຍໃຕ້ພະລາຊະບັດຍັດການໂຕ້ຕອບໄວຣັສໂຄໂຣນາຄັ້ງທຳອິດໃນຄອບຄົວ (FFCRA). ທ່ານຈະຕ້ອງຕິດຕໍ່ນາຍຈ້າງຂອງທ່ານເພື່ອສະໜອງເອກະສານທີ່ຈຳເປັນກ່ຽວກັບສະຖານະການຂອງທ່ານ. ຖ້າການເຮັດວຽກຢູ່ເຮືອນ ຫຼື ການລາພັກແບບໄດ້ຮັບຄ່າຈ້າງບໍ່ມີໃຫ້, ທ່ານສາມາດຍື່ນເລື່ອງຜົນປະໂຫຍດປະກັນການຫວ່າງງານໄດ້. ຖ້າທ່ານບໍ່ມີສິດໄດ້ຮັບຜົນປະໂຫຍດຂອງລັດ, ທ່ານອາດຈະຍັງຄົງມີສິດໄດ້ຮັບຜົນປະໂຫຍດພາຍໃຕ້PUA.

ຄຳຖາມ **28:** ຂ້າພະເຈົ້າບໍ່ມີສິດໄດ້ຮັບຜົນປະໂຫຍດການຫວ່າງງານຂອງລັດ ເນື່ອງຈາກການລາອອກຈາກວຽກກ່ອນ ຫຼື ຍ້ອນຂ້າພະເຈົ້າບໍ່ສາມາດ ແລະ ພ້ອມທີ່ຈະເຮັດວຽກ ເນື່ອງຈາກເຫດຜົນຂອງ COVID-19, ຂ້າພະເຈົ້າຍັງຄົງບໍ່ມີສິດໄດ້ຮັບຜົນປະໂຫຍດພາຍໃຕ້ພະລາຊະບັດຍັດ CARES?
ຄຳຕອບ**:** ອາດຈະໄດ້ຮັບ. ຖ້າທ່ານບໍ່ມີສິດໄດ້ຮັບຜົນປະໂຫຍດຂອງລັດ, ທ່ານຈຳເປັນຕ້ອງໄດ້ສະໝັກ PUA. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງ: https://www.iowaworkforcedevelopment.gov/pua-information. ທ່ານຈະໄປທີ່ຂັ້ນຕອນ 3 ແລະປະກອບແບບສອບຖາມໃຫ້ສຳເລັດ ເມື່ອທ່ານເລືອກທີ່ຈະ “ສົ່ງຫຼັກຖານລາຍໄດ້.”

ຄຳຖາມ **29**: ຖ້າຂ້າພະເຈົ້າມີສິດໄດ້ຮັບ, ຂ້າພະເຈົ້າຈະໄດ້ຮັບການຈ່າຍເງິນເພີ່ມເຕີມຈຳນວນ $600 ຂອງຂ້າພະເຈົ້າເມື່ອໃດ?

ຄຳຕອບ: ການຈ່າຍເງິນ $600 ໄດ້ເລີ່ມຕົ້ນຈ່າຍອອກໃຫ້ການອ້າງສິດທີ່ມີສິດໄດ້ຮັບຫຼາຍທີ່ສຸດ ເຊິ່ງລວມເຖິງຜົນປະໂຫຍດການຫວ່າງງານຫຼາຍທີ່ສຸດ ຍົກເວັ້ນ ຜົນປະໂຫຍດການຂະຫຍາຍການເຝິກອົບຮົມ ແລະ ຜົນປະໂຫຍດໃນການປິດກິດຈະກຳ. ຖ້າທ່ານເລືອກໃຫ້ເກັບພາສີຈາກຜົນປະໂຫຍດຂອງທ່ານ, ການຈ່າຍເງິນຂອງທ່ານຈະຖືກຫັກ. ຖ້າທ່ານເຊື່ອວ່າການອ້າງສິດຂອງທ່ານມີສິດໄດ້ຮັບເງິນເພີ່ມເຕີມຈຳນວນ $600 ແລະ ທ່ານບໍ່ໄດ້ຮັບມັນ, ກະລຸນາຕິດຕໍ່ຝ່າຍບໍລິການໄດ້ທີ່ uiclaimshelp@iwd.iowa.gov.

ຄຳຖາມ **30:** ຖ້າຂ້າພະເຈົ້າມີສິດ ແລະ ໄດ້ຮັບເງິນຜົນປະໂຫຍດ $600 ຂອງຂ້າພະເຈົ້າ, ຂ້າພະເຈົ້າຈະຍັງຄົງໄດ້ຮັບກໍລະນີຫວ່າງງານແບບເຕັມຈຳນວນຢູ່ບໍ? ຄຳຕອບ: ແມ່ນແລ້ວ, ຜົນປະໂຫຍດ $600 ເປັນເງິນເພີ່ມເຕີມນອກຈາກການຫວ່າງງານ ແລະ ມັນບໍ່ໄດ້ຖືກຫັກຈາກຈຳນວນຜົນປະໂຫຍດປະຈຳອາທິດທີ່ທ່ານຈະໄດ້ຮັບ.

ຄຳຖາມ **31**: ຖ້າຂ້າພະເຈົ້າໄດ້ຮັບການຈ່າຍເງິນ $600 ຕໍ່ອາທິດ ຫຼື ການຈ່າຍຜົນປະໂຫຍດທີ່ເປັນສິ່ງກະຕຸ້ນອື່ນໆໃດໜຶ່ງຂອງລັດຖະບານກາງ ແລະ ໃນພາຍຫຼັງມີການພິຈາລະນາວ່າ ຂ້າພະເຈົ້າບໍ່ຄວນໄດ້ຮັບມັນ, ຂ້າພະເຈົ້າຈະຕ້ອງໄດ້ຈ່າຍເງິນຄືນບໍ?
ຄຳຕອບ: ແມ່ນແລ້ວ, ການຈ່າຍເງິນຜົນປະໂຫຍດປະກັນການຫວ່າງງານໃດໜຶ່ງທີ່ທ່ານໄດ້ຮັບ ແລະ ໃນພາຍຫຼັງມີການພິຈາລະນາວ່າທ່ານບໍ່ມີສິດໄດ້ຮັບ, ທ່ານຈຳເປັນຈະຕ້ອງໄດ້ຈ່າຍເງິນຄືນ.

ຄຳຖາມ **32**: ຖ້າຂ້າພະເຈົ້າຖືກຕັດສິດຈາກການຮັບຜົນປະໂຫຍດການຫວ່າງງານຂອງລັດ ຫຼື ລັດຖະບານກາງ, ຂ້າພະເຈົ້າຈະຍັງຄົງໄດ້ຮັບການຈ່າຍເງິນຈາກມາດຕະຖານກະຕຸ້ນເສດຖະກິດຂອງລັດຖະບານກາງໃນຈຳນວນ $600 ຕໍ່ອາທິດໄດ້ຫຼືບໍ່?
ຄຳຕອບ: ບໍ່ໄດ້. ທ່ານຈະຕ້ອງມີສິດສຳລັບຜົນປະໂຫຍດປະກັນການຫວ່າງງານຂອງລັດ ຫຼື ລັດຖະບານກາງ ເພື່ອທີ່ຈະມີສິດໄດ້ຮັບເງິນເພີ່ມເຕີມ $600 ຕໍ່ອາທິດ.

ຄຳຖາມ **33**: ຖ້າຈຳເປັນ, ການນັດໝາຍ RESEA ແລະ/ຫຼື ວຽກທີ່ຮັບປາກຈະເຮັດສາມາດດຳເນີນການຜ່ານທາງໂທລະສັບໄດ້ບໍ?
ຄຳຕອບ: ພວກເຮົາກຳລັງເຮັດວຽກຜ່ານຄຳແນະນຳທີ່ກ່ຽວຂ້ອງກັບໂປຣແກຣມ ແລະ ໃຊ້ເທັກໂນໂລຊີເພື່ອໃຫ້ບໍລິການ ແລະ ຈະອັບເດດທັນທີທີ່ພ້ອມໃຊ້ງານ.

ຄຳຖາມ **34**: ຖ້າວິທະຍາໄລຍັງສືບຕໍ່ປິດ ຫຼື ສອນທາງອອນລາຍເທົ່ານັ້ນ, ສິ່ງນັ້ນຈະສົ່ງຜົນກະທົບຕໍ່ສຳນັກງານໃນທ້ອງຖິ່ນໄປຈົນເຖິງພະນັກງານທີ່ເຮັດວຽກຮ່ວມກັນຢ່າງໃດ?
ຄຳຕອບ: ຫົວຂໍ້ I ໂປຣແກຣມສຳລັບຜູ້ໃຫຍ່, ຄົນງານທີ່ຕົກງານ ແລະ ເຍົາວະຊົນ, ລວມເຖິງໂປຣແກຣມການຊ່ວຍເຫຼືອໃນການປັບຕົວທາງການຄ້າ (“TAA”), ຍັງຄົງສືບຕໍ່ໃຫ້ບໍລິການແກ່ຊາວໄອໂອວາໃນຊ່ວງເວລາທີ່ບໍ່ເຄີຍມີມາກ່ອນນີ້. ຄວນໃຫ້ບໍລິການຕາມຄວາມຈິງ ແລະ ຜ່ານທາງໂທລະສັບຕາມຄວາມເໝາະສົມ.

ຄຳຖາມ **35:** ໃນກໍລະນີທີ່ວິທະຍາໄລພິຈາລະນາປິດ ແລະ ຍ້າຍໄປເປັນຫຼັກສູດທາງອອນລາຍທັງໝົດ. ຈະເກີດຫຍັງຂຶ້ນຖ້າຂໍ້ I ຫຸ້ນສ່ວນປະຕິບັດຕາມຄຳສັ່ງນັ້ນ ແລະ ບໍ່ເຂົ້າມາໃນສູນ?
ຄຳຕອບ: ຫົວຂໍ້ I ໂປຣແກຣມສຳລັບຜູ້ໃຫຍ່, ຄົນງານທີ່ຕົກງານ ແລະ ເຍົາວະຊົນ, ລວມເຖິງໂປຣແກຣມ TAA, ຍັງຄົງສືບຕໍ່ໃຫ້ບໍລິການແກ່ຊາວໄອໂອວາໃນຊ່ວງເວລາທີ່ບໍ່ເຄີຍມີມາກ່ອນນີ້. ຄວນໃຫ້ບໍລິການຕາມຄວາມຈິງ ແລະ ຜ່ານທາງໂທລະສັບຕາມຄວາມເໝາະສົມ.

ຄຳຖາມ **36**: ຂ້າພະເຈົ້າເປັນຄູສອນຜູ້ທີ່ຢູ່ໃນຊ່ວງພັກໃນລະດູໃບໄມ້ປົ່ງ. ຂ້າພະເຈົ້າມີສິດໄດ້ຮັບຜົນປະໂຫຍດການຫວ່າງງານບໍ? ຄຳຕອບ: ບໍ່, ບໍ່ແມ່ນຊ່ວງເວລາພັກທີ່ເຖິງກຳນົດ ຖ້າທ່ານໄດ້ເຊັນສັນຍາແລ້ວ ແລະ ເນື່ອງຈາກກົດການຮັບປະກັນທີ່ສົມເຫດສົມຜົນ. ຖ້າທ່ານຍັງຄົງຍື່ນຂໍຜົນປະໂຫຍດ ເນື່ອງຈາກບໍ່ມີວຽກເຮັດຫຼັງຈາກພັກຊ່ວງລະດູໃບໄມ້ປົ່ງ, ທ່ານຈະມີສິດໄດ້ຮັບຜົນປະໂຫຍດຖ້າທ່ານບໍ່

ໄດ້ຮັບເງິນເດືອນຈາກນາຍຈ້າງຂອງທ່ານເທົ່ານັ້ນ.
ຢ່າງໃດກໍ່ຕາມ, ຖ້ານາຍຈ້າງຂອງທ່ານເອີ້ນທ່ານຄືນ, ທ່ານຈະຕ້ອງສາມາດກັບຄືນໄປເຮັດວຽກໄດ້. ຖ້າທ່ານບໍ່ສາມາດກັບຄືນໄປເຮັດວຽກໄດ້ເມື່ອມີການເອີ້ນຄືນ ການມີສິດໄດ້ຮັບຂອງທ່ານສໍາລັບຜົນປະໂຫຍດນັ້ນອາດຈະຖືກສອບຖາມ.

ຄໍາຖາມ **37**: ຂ້າພະເຈົ້າເປັນຄູຜູ້ທີ່ບໍ່ໄດ້ເຮັດວຽກເນື່ອງຈາກ COVID-19, ບໍ່ແມ່ນການພັກຕາມກໍານົດເວລາ. ຂ້າພະເຈົ້າມີສິດໄດ້ຮັບຜົນປະໂຫຍດປະກັນການຫວ່າງງານບໍ ໃນຊ່ວງເວລາທີ່ໂຮງຮຽນຂອງຂ້າພະເຈົ້າຖືກປິດ?
ຄໍາຕອບ: ອາດຈະໄດ້ຮັບ. ຖ້າຫາກໂຮງຮຽນຈະສືບຕໍ່ຈ່າຍເງິນໃຫ້ທ່ານ ຫຼັງຈາກນັ້ນທ່ານຈະຕ້ອງໄດ້ລາຍງານລາຍໄດ້ປະຈໍາອາທິດຂອງທ່ານໃນຊ່ວງເວລານີ້ ແລະ ອາດຈະເປັນໄປໄດ້ວ່າຈະມີລາຍໄດ້ຫຼາຍເກີນໄປທີ່ຈະມີສິດໄດ້ຮັບຜົນປະໂຫຍດ. ຖ້າໜ່ວຍງານບໍລິຫານທ້ອງຖິ່ນຂອງໂຮງຮຽນຈະບໍ່ຈ່າຍເງິນໃຫ້ທ່ານ ຈາກນັ້ນແມ່ນແລ້ວ, ທ່ານອາດມີສິດໄດ້ຮັບຜົນປະໂຫຍດທີ່ເປັນໄປໄດ້. ຢ່າງໃດກໍ່ຕາມ, ຖ້ານາຍຈ້າງຂອງທ່ານເອີ້ນທ່ານຄືນໄປເຮັດວຽກ, ທ່ານຈະຕ້ອງສາມາດກັບຄືນໄປໄດ້. ບໍ່ດັ່ງນັ້ນ ການມີສິດຂອງທ່ານຈະຖືກສອບຖາມ.

ຄໍາຖາມ **38**: ຂ້າພະເຈົ້າເປັນຜູ້ຊ່ວຍຄູ/ ຜູ້ສອນ ແລະ ໂຮງຮຽນຂອງຂ້າພະເຈົ້າຖືກປິດ. ຂ້າພະເຈົ້າຈະບໍ່ໄດ້ຮັບເງິນສໍາລັບຊ່ວງເວລາທີ່ໂຮງຮຽນຂອງຂ້າພະເຈົ້າປິດ. ຂ້າພະເຈົ້າມີສິດໄດ້ຮັບຜົນປະໂຫຍດປະກັນການຫວ່າງງານບໍ?
ຄໍາຕອບ: ຖ້າທ່ານຢູ່ໃນຊ່ວງພັກຂອງໂຮງຮຽນທີ່ກໍານົດໄວ້ ເຊັ່ນ ອາທິດທີ່ພັກໃນລະດູໃບໄມ້ປົ່ງ, ທ່ານຈະບໍ່ໄດ້ຮັບສິດສໍາລັບອາທິດນັ້ນ. ຖ້າທ່ານບໍ່ໄດ້ພັກຕາມເວລາທີ່ກໍານົດໄວ້ແລ້ວທ່ານຈະມີສິດໄດ້ຮັບຜົນປະໂຫຍດ. ຢ່າງໃດກໍ່ຕາມ, ຖ້ານາຍຈ້າງຂອງທ່ານເອີ້ນທ່ານຄືນ, ທ່ານຈະຕ້ອງສາມາດກັບຄືນໄປເຮັດວຽກໄດ້. ຖ້າທ່ານບໍ່ສາມາດກັບຄືນໄປເຮັດວຽກໄດ້ເມື່ອມີການເອີ້ນຄືນ ການມີສິດໄດ້ຮັບຂອງທ່ານສໍາລັບຜົນປະໂຫຍດນັ້ນອາດຈະຖືກສອບຖາມ.

ອັບເດດ: ໃນເວລານີ້, IWD ບໍ່ໄດ້ຮຽກເກັບເງິນນຳນາຍຈ້າງສຳລັບການອ້າງສິດຂອງລູກຈ້າງຂອງພວກເຂົາ ເນື່ອງຈາກການຫວ່າງງານທີ່ກ່ຽວຂ້ອງກັບ Covid 19. ພວກເຮົາໄດ້ສ້າງຕົວກະຕຸ້ນສຳລັບຄວາມສົມດຸນຂອງກອງທຶນໄວ້ວາງໃຈປະກັນການຫວ່າງງານ ເຊິ່ງໃນຈຸດນີ້, ມັນຈະຕ້ອງມີຄວາມຈຳເປັນໃນການເລີ່ມຕົ້ນຄິດຄ່າໃຊ້ຈ່າຍໃນບັນຊີຂອງນາຍຈ້າງສຳລັບການອ້າງສິດການຫວ່າງງານຕາມລຳດັບ. ພວກເຮົາໄດ້ສ້າງຕົວກະຕຸ້ນໄວ້ທີ່ $950M ແລະ ກອງທຶນໄວ້ວາງໃຈທີ່ $1.10B ຫຼື $180 ລ້ານໂດລາ ຫຼາຍກວ່າຕົວກະຕຸ້ນ $950 ລ້ານ. ການຕັດສິນໃຈຄັ້ງນີ້ມີຂຶ້ນເພື່ອຊ່ວຍໃນການຟື້ນຕົວຂອງພວກເຮົາໂດຍການຫຼຸດການເພີ່ມຂຶ້ນໃດໜຶ່ງທີ່ພວກເຂົາອາດຈະປະເຊີນໃນອັດຕາພາສີການຫວ່າງງານ ເຊິ່ງສ່ວນໃຫຍ່ຈະຢູ່ໃນຍອດເງິນກອງທຶນໄວ້ວາງໃຈ. ພະລາຊະບັນຍັດ CARES ທີ່ອ້າງສິດສຳລັບຜູ້ປະກອບອາຊີບອິດສະຫຼະ ແລະ ຜົນປະໂຫຍດ $600 ຕໍ່ອາທິດ ຈະບໍ່ໄດ້ຖືກຈ່າຍຈາກກອງທຶນໄວ້ວາງໃຈ.

ຂໍ້ມູນເພີ່ມເຕີມສາມາດເບິ່ງໄດ້ທີ່ iowaworkforcedevelopment.gov. ກະລຸນາກວດເບິ່ງໜ້າເວັບຂອງພວກເຮົາທຸກໆວັນເພາະວ່າພວກເຮົາຈະອັບເດດຂໍ້ມູນທັງໝົດຕາມທີ່ພວກເຮົາໄດ້ຮັບມັນ.

ຄຳຖາມ ແລະ ຄຳຕອບຂ້າງເທິງຖືກອອກແບບມາເພື່ອຊ່ວຍໃນການຕອບຄຳຖາມພື້ນຖານທີ່ພວກເຮົາໄດ້ຮັບ. ບໍ່ມີສິ່ງໃດໃນຄຳແນະນຳນີ້ຄືຄຳແນະນຳທາງດ້ານກົດໝາຍ; ບໍ່ໄດ້ຕັ້ງໃຈທີ່ຈະໃຊ້ໃນແບບດຽວກັນ. ຖ້າຫາກວ່າທ່ານມີຄຳຖາມ, ກະລຸນາເບິ່ງກົດໝາຍວ່າດ້ວຍຄວາມໝັ້ນຄົງການຈ້າງງານຂອງລັດໄອໂອວາ ລະຫັດ
§ 96. ນອກຈາກນີ້ ຄຳແນະນຳ ແລະ ຂໍ້ມູນເພີ່ມເຕີມຍັງມີຢູ່ໃນກະຊວງແຮງງານຂອງລັດຖະບານກາງ ເຊິ່ງສາມາດເບິ່ງໄດ້ທີ່ www.dol.gov/coronavirus.

ອັບເດດໃນວັນທີ 30 ເມສາ 2020